ສາທາລະນະ ລັດປະຊາທິປະ ໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********************

ກະຊວງການເງິນ

ເລກທີ 3149/ກງ

ນະຄອນຫຼວງວຽງຈັນ, ວັນທີ 06 NOV 2013

## ຄໍາແນະນໍາ

## ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2013-2014

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບປັບປຸງ ເລກທີ 02/ສພຊ. ລົງວັນທີ 26/12/2006
- ອີງຕາມມະຕິກອງປະຊຸມຂອງສະພາແຫ່ງຊາດຊຸດທີ VII ສະໄໝເທື່ອທີ 5 ສະບັບເລກທີ 02 /ສພຊ, ລົງວັນທີ 26 ກໍລະກົດ 2013 ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2012-2013 ແລະ ທິດທາງແຜນການ ສົກປີ 2013-2014.
- ອີງຕາມດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 241 /ນຍ, ລົງວັນທີ 12 ກັນຍາ 2013 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແລະແຜນງົບປະມານແຫ່ງລັດສົກປີ2013-2014.

ລັດຖະມົນຕີວ່າການກະຊວງການເງິນ ອອກຄໍາແນະນໍາ ດັ່ງນີ້:

### I. ຈຸດປະສົງ

ຄໍາແນະນໍາສະບັບນີ້ ກໍານົດວິທີການມາດຕະການການຈັດຕັ້ງປະຕິບັດແຜນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ສົກປີ 2013-2014 ເພື່ອຊຸດຄົ້ນເກັບລາຍຮັບໃຫ້ໄດ້ຕາມແຜນ ແລະ ລື່ນແຜນ, ຄຸ້ມຄອງລາຍຈ່າຍໃຫ້ຖືກຕ້ອງຕາມແຜນການທີ່ສະພາແຫ່ງຊາດໄດ້ຮັບຮອງ ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດວິໄນການເງິນ-ງົບປະມານ ແນ່ໃສ່ຄວາມມີສະຖຽນລະພາບທີ່ໝັ້ນຄົງທາງດ້ານການເງິນຂອງລັດ ແລະ ສະຖຽນລະພາບເສດຖະກິດມະຫາພາກໂດຍລວມ ປະກອບສ່ວນຍູ້ແຮງການພັດທະນາເສດຖະກິດ-ສັງຄົມ ໃຫ້ບັນລຸຄາດໝາຍທີ່ລັດຖະບານກໍານົດໄວ້.

### II. ລະດັບຄາດໝາຍ

ເພື່ອປະຕິບັດໄດ້ຕາມ ຈຸດປະສົງທີ່ກ່າວຂ້າງເທິງນີ້, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2013-2014 ຕ້ອງບັນລຸບາງຄາດໝາຍຕົ້ນຕໍ ດັ່ງນີ້:

2.1 <u>ຄາດໝາຍລວມ</u>:

- ຮັບປະກັນສະຖຽນລະພາບທາງດ້ານການເງິນ-ເງິນຕາ ໃຫ້ມີຄວາມໝັ້ນທ່ຽງ ສ້າງເງື່ອນໄຂເອື້ອອຳນວຍ ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃຫ້ບັນລຸຜົນສຳເລັດ ຕາມຄາດໝາຍທີ່ກຳນົດໄວ້.

- ເກັບລາຍຮັບງົບປະມານແຫ່ງລັດທັງໝົດໃຫ້ໄດ້ບໍ່ຫຼຸດ 32,81%ຂອງ GDP ໃນນັ້ນ: ລາຍຮັບພາຍໃນໃຫ້ໄດ້ 22,27% ຂອງ GDP ທຽບໃສ່ປີຜ່ານມາເພີ່ມຂຶ້ນ 14,64%.

- ປະຕິບັດລາຍຈ່າຍທັງໝົດບໍ່ເກີນ 32,81%ຂອງ GDP ທຽບໃສ່ປີຜ່ານມາເພີ່ມຂຶ້ນ 9,04%. ການຂາດດຸນງົບປະມານ ຢູ່ໃນລະດັບ 5% ຂອງ GDP.

- ປະຕິບັດຫຼັກການລວມສູນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ, ສູ້ຊົນບຸກບືນສຸດຂີດ ເພື່ອຂຸດຄົ້ນຫາແຫຼ່ງລາຍຮັບທີ່ຍັງບົ່ມຊ້ອນ, ເກັບໃຫ້ໄດ້ໝົດ ແລະ ມອບເຂົ້າງົບປະມານໃຫ້ຄົບຖ້ວນ, ຈຳກັດການຮົ່ວໄຫຼຂອງລາຍຮັບ ໃຫ້ໄດ້ຢ່າງສຸດເຈນ.

- ຄຸ້ມຄອງດ້ານລາຍຈ່າຍຢ່າງຮັດກຸມ ມີປະສິດທິຜົນ, ຖືກເປົ້າໝາຍ, ປະຢັດມັດທະຍັດ ຕ້ານການຟູມເຟືອຍ ດ້ວຍການເພີ່ມທະວີການຕິດຕາມກວດກາ, ເປັນລະບົບ, ມີມາດຕະການ ແລະ ປະຕິບັດວິໄນ ການເງິນຕໍ່ຜູ້ກະທຳຜິດ ຢ່າງເຂັ້ມງວດ ທັນການ.

2.2. <u>ຄາດໝາຍລະອຽດແຕ່ລະດ້ານ</u>

ໃນສົກປີ 2013-2014 ພວກເຮົາຕ້ອງສູ້ຊົນປະຕິບັດ ຄາດໝາຍລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ດັ່ງລາຍລະອຽດຄື :

<u>2.2.1</u> <u>ດ້ານລາຍຮັບ:</u>

ສູ້ຊົນເກັບລາຍຮັບໃຫ້ໄດ້ບໍ່ຫຼຸດ 29.745 ຕື້ກີບ ເທົ່າກັບ 32,81% ຂອງ GDP ທຽບໃສ່ ປີຜ່ານມາ ເພີ່ມຂຶ້ນ 9,04% ໃນນັ້ນ:

- <u>ລາຍຮັບພາຍໃນ 20.186,15 ຕື້ກີບ</u> ເທົ່າກັບ 22,27% ຂອງ GDP ທຽບໃສ່ປີຜ່ານມາເພີ່ມຂຶ້ນ 14,64% ( ມູນຄ່າຂອງ GDP 90.650 ຕື້ກີບ ) .ໃນນັ້ນ:

| | | |
|---|---|---|
| + ລາຍຮັບສ່ວຍສາອາກອນ | 9.778,32 ຕື້ກີບ | ເພີ່ມຂຶ້ນ 21,54% |
| ໃນນີ້: ມີລາຍຮັບທີ່ດິນ: | 112,84 ຕື້ກີບ | ເພີ່ມຂຶ້ນ 12,22% |
| ລາຍຮັບວິຊາການ | 895,93 ຕື້ກີບ | ເພີ່ມຂຶ້ນ 73,27% |
| + ພາສີ | 5.071,79 ຕື້ກີບ | ເພີ່ມຂຶ້ນ 15,34% |
| + ຄຸ້ມຄອງການເງິນລັດວິສາຫະກິດ | 1.631,22ຕື້ກີບ | ເພີ່ມຂຶ້ນ 7,02% |
| + ຊັບສິນຂອງລັດ | 3.065,35 ຕື້ກີບ | ເພີ່ມຂຶ້ນ 72,16% |
| ໃນນີ້ມີ: ລາຍຮັບຈາກທຸລະກິດໄມ້ | 159,89 ຕື້ກີບ | ເພີ່ມຂຶ້ນ 6,59% |
| +ລາຍຮັບອື່ນໆ | 639,47 ຕື້ກີບ | ເພີ່ມຂຶ້ນ 6,09% |

- ລາຍຮັບຈາກການຊ່ວຍເຫຼືອລ້າ 5.030,00 ຕື້ກີບ ເພີ່ມຂຶ້ນ 4,99%
  + ຊ່ວຍເຫຼືອຈາກຕ່າງປະເທດເປັນໂຄງການ ທີ່ກະຊວງການເງິນຄຸ້ມຄອງ 1.206,24 ຕື້ກີບ ເພີ່ມຂຶ້ນ 2,48%
  + ຊ່ວຍເຫຼືອຈາກຕ່າງປະເທດເປັນໂຄງການ ທີ່ກະຊວງ ກຜທ ຄຸ້ມຄອງ 3.593,76 ຕື້ກີບ ເພີ່ມຂຶ້ນ 9,53%
  + ຊ່ວຍເຫຼືອດັດແກ້ມະຫາພາກ 230,00 ຕື້ກີບ ຫຼຸດລົງ 30,93%

- ລາຍຮັບຈາກແຫຼ່ງດຸ່ນດ່ຽງ: 4.529,00 ຕື້ກີບ ຫຼຸດລົງ 7,19%.
  + ກູ້ຢືມພາຍໃນປະເທດ 2.911,00 ຕື້ກີບ ຫຼຸດລົງ 7,23%.
  + ກູ້ຢືມຕ່າງປະເທດເປັນໂຄງການ 1.618,00 ຕື້ກີບ ຫຼຸດລົງ 7,14%

2.2.2 ດ້ານລາຍຈ່າຍ:

ຄຸ້ມຄອງລາຍຈ່າຍ ໃຫ້ຢູ່ໃນລະດັບບໍ່ເກີນ 29.745,09 ຕື້ກີບ ທຽບໃສ່ສົກປີ ຜ່ານມາເພີ່ມຂຶ້ນ 9,04% ຫລື ເທົ່າກັບ 32,81% ຂອງ GDP ໃນນີ້:

- ເງິນເດືອນ ແລະ ເງິນອຸດໜູນ 8.800,00 ຕື້ກີບ ຫຼຸດລົງ 1,39%
- ເງິນນະໂຍບາຍ ແລະ ເງິນຊ່ວຍໜູນຕ່າງໆ 1.400,00 ຕື້ກີບ ເພີ່ມຂຶ້ນ 24,94%
- ລາຍຈ່າຍບໍລິຫານ + ຊື້ຊັບສິນບັດຄົງທີ່ 3.000,00 ຕື້ກີບ ເພີ່ມຂຶ້ນ 73,39%
- ລາຍຈ່າຍດັດສົມ, ສົ່ງເສີມ 2.110,15 ຕື້ກີບ ເພີ່ມຂຶ້ນ 93,51%
- ເງິນແຮ ແລະ ອື່ນໆ 100,00 ຕື້ກີບ ຫຼຸດລົງ 2,70%
- ຄັງສະສົມແຫ່ງລັດ 300,00 ຕື້ກີບ ເພີ່ມຂຶ້ນ 100%
- ໜີ້ສິນຕ່າງໆ 4.317,26 ຕື້ກີບ ຫຼຸດລົງ 0,93%
  + ໜີ້ຕ່າງປະເທດ 2.029,04 ຕື້ກີບ ເພີ່ມຂຶ້ນ 30,25%
  + ໜີ້ພາຍໃນ 2.288,22 ຕື້ກີບ ຫຼຸດລົງ 18,28%
- ລົງທຶນພາຍໃນ ແລະ ຕ່າງປະເທດ 9.717,68 ຕື້ກີບ ເພີ່ມຂຶ້ນ 5,80%
  + ຈາກການຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ 6.417,68 ຕື້ກີບ ເພີ່ມຂຶ້ນ 3,51%
  + ລົງທຶນພາຍໃນທັງໝົດ 3.300,00 ຕື້ກີບ ເພີ່ມຂຶ້ນ 10,55%

2.2.3 ການດຸ່ນດ່ຽງງົບປະມານ

ບົນພື້ນຖານຄາດໝາຍລາຍຮັບ-ລາຍຈ່າຍ ທີ່ກ່າວມານັ້ນ, ງົບປະມານສົກປີ 2013-2014 ຈະຂາດດຸ່ນທັງໝົດ 4.529 ຕື້ກີບ ເທົ່າກັບ 5 % ຂອງGDP.

## III. ມາດຕະການຈັດຕັ້ງປະຕິບັດ

### 3.1 ມາດຕະການລວມ

- ຕົວເລກຄາດໝາຍລາຍຮັບທີ່ສະພາບແຫ່ງຊາດໄດ້ຮັບຮອງ ແລະ ລັດຖະບານໄດ້ກຳນົດໄວ້ໃນດຳລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດແລ້ວນັ້ນ ແມ່ນຕົວເລກຄາດໝາຍຕ່ຳສຸດ, ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງຈັດຕັ້ງປະຕິບັດ ໃຫ້ໄດ້ຄາດໝາຍ ແລະ ລື່ນຄາດໝາຍ ມີນຈິດໃຈສູ້ຊົນບຸກບືນສູງ ດ້ານການຂຸດຄົ້ນ ຄວາມອາດສາມາດບົ່ມຊ້ອນ ທີ່ມີໃຫ້ໄດ້ຢ່າງເຕັມສ່ວນ, ຈຳກັດແລະແກ້ໄຂຊ່ອງຫວ່າງການຮົ່ວໄຫລ, ການຕົກເຫຼ່ຍເສັຍຫາຍລາຍຮັບງົບປະມານ ໃຫ້ໄດ້ຢ່າງເປັນຮູບປະທຳ; ເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງ.
- ຈັດຕັ້ງປະຕິບັດການໂຄສະນາເຜີຍແຜ່ບັນດານິຕິກຳທີ່ກ່ຽວຂ້ອງກັບການຂຸດຄົ້ນເກັບລາຍຮັບງົບປະມານໃຫ້ແກ່ພະນັກງານລັດຖະກອນ, ນັກທຸລະກິດ, ຜູ້ປະກອບການ ແລະ ປະຊາຊົນ ເພື່ອຄວາມຮັບຮູ້ເຂົ້າໃຈເປັນເອກະພາບ ໃນທາງປະຕິບັດ ແລະ ປະຕິບັດສິດ ແລະພັນທະຂອງຕົນ ຕາມທີ່ກົດໝາຍກຳນົດໄວ້, ເປັນເຈົ້າການປະຕິບັດການແຈ້ງແລະມອບລາຍຮັບເຂົ້າງົບປະມານໃຫ້ຄົບຖ້ວນແລະທັນເວລາ; ຮີບຮ້ອນສ້າງແລະປັບປຸງຂໍ້ກຳນົດ, ກົດໝາຍທີ່ເຫັນວ່າມີຄວາມຈຳເປັນໃຫ້ມີຄວາມຄົບຖ້ວນ, ສອດຄ່ອງເໝາະສົມກັບສະພາບການພັດທະນາໃນໄລຍະໃໝ່. .
- ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ສະມາຊິກພັກ ຂອງຂະແໜງການເງິນແລະຂະແໜງການກ່ຽວຂ້ອງ ໃຫ້ມີການຫັນປ່ຽນທາງດ້ານແນວຄິດ ຈິນຕະນາການ ປັບປຸງທັດສະນະຫລັກໝັ້ນຊົນຊັ້ນ, ຄຸນສົມບັດສົມທຳປະຕິວັດ, ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ທັດສະນະຮັບໃຊ້ ບໍລິການປະຊາຊົນ ເວົ້າແລະເຮັດຕາມລະບຽບກົດໝາຍ, ຕ້ານແນວຄິດ ແລະ ການກະທຳທີ່ເປັນການສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ແກ້ໄຂສິ່ງຫຍໍ້ທໍ້ໃນກົງຈັກການຈັດຕັ້ງ ແລະ ຄຸ້ມແຄວພະນັກງານຢ່າງເຂັ້ມງວດ ທັນເວລາ ມີນຈິດໃຈ ເລື່ອງເກີດຢູ່ບ່ອນໃດ ແມ່ນບ່ອນນັ້ນເປັນຜູ້ຮັບຜິດຊອບ ແກ້ໄຂຢ່າງທັນການ.
- ຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງຖານລາຍຮັບໃຫ້ລະອຽດຈະແຈ້ງ ມີນຈິດໃຈເພີ່ມຄວາມຮັບຜິດຊອບຂອງບັນດາຂະແໜງການແລະທ້ອງຖິ່ນ (ລວມທັງຂັ້ນແຂວງ, ເມືອງ ແລະ ບ້ານ) ໃນການຂຸດຄົ້ນເກັບລາຍຮັບແລະຄຸ້ມຄອງລາຍຈ່າຍ ຕາມທິດທາງ 3 ສ້າງ. ປະຕິບັດກົນໄກກະຕຸກຊຸກຍູ້ ແລະ ສົ່ງເສີມຄວາມຮັບຜິດຊອບໃນການເກັບລາຍຮັບຂອງບັນດາທ້ອງຖິ່ນໃຫ້ເປັນຮູບປະທຳ ຕາມທີ່ກຳນົດໄວໃນຄຳແນະນຳສາມສ້າງ ຂອງຂະແໜງການເງິນ ສະບັບເລກທີ 2202/ກງ, ລົງວັນທີ 15 ສິງຫາ 2012.
- ຮີບຮ້ອນປັບປຸງກົງຈັກການຈັດຕັ້ງ ກົນໄກການເຄື່ອນໄຫວຂອງ 03 ຂະແໜງສາຍຕັ້ງ ໃຫ້ມີການປັບປຸງປ່ຽນແປງມີນຈິດໃຈບຸກທະລຸຢ່າງແທ້ຈິງ ເປັນຕົ້ນ ປັບປຸງການຄຸ້ມຄອງ, ການຕິດຕາມກວດກາຂອງສູນກາງ ໃຫ້ທົ່ວເຖິງຮອດຂັ້ນເມືອງ; ເພີ່ມຄວາມຮັບຜິດຊອບຂອງທ້ອງຖິ່ນຕໍ່ 3 ຂະແໜງສາຍຕັ້ງ ໃນດ້ານຊີວິດການເມືອງ, ການຈັດຕັ້ງ ແລະ ວຽກງານພັກ-ພະນັກງານ ໃນກໍລະນີຂະແໜງສາຍຕັ້ງຢູ່ຂັ້ນໃດໜຶ່ງ ຫລື ທ້ອງຖິ່ນໃດໜຶ່ງ ມີຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດໜ້າທີການເມືອງທີ່ໄດ້ມອບໝາຍ, ອຳນາດການປົກຄອງຂັ້ນນັ້ນ ຫຼື ທ້ອງຖິ່ນນັ້ນກໍ່ມີສ່ວນຮັບຜິດຊອບນຳ.
- ປັບປຸງກົງຈັກການຕິດຕາມກວດກາ ແລະ ກົນໄກການເກັບລາຍຮັບຂອງບັນດາຂະແໜງລາຍຮັບ ໃຫ້ມີການຫັນປ່ຽນສູ່ວິທີການໃໝ່ທີ່ມີຄວາມຮັດກຸມ, ໂປ່ງໃສ ແລະ ເຄື່ອນໄຫວຢູ່ໃນທ່າບຸກ, ຫັນລົງສູ່ຮາກຖານຢ່າງແຂງແຮງ ເພື່ອປັບປຸງວຽກງານຢູ່ຂັ້ນທອງຖິ່ນ ໂດຍສະເພາະຢູ່ຂັ້ນເມືອງ ໃຫ້ມີຄຸນນະພາບສູງຂຶ້ນ. ຊຸກຍູ້,

ຕິດຕາມ ກວດກາການເຮັດທົດລອງ 3 ສ້າງ ຂອງຂະແໜງການເງິນ ໃຫ້ສາມາດບັດລຸຈຸດປະສົງ ຄາດໝາຍ ທີ່ກຳນົດໄວ້.

- ຍູ້ແຮງການພັດທະນາລະບົບການບໍລິຫານຂໍ້ມູນຂ່າວສານການເງິນແຫ່ງລັດ ຕາມທິດທັນເປັນທັນສະໄໝ ດ້ວຍລະບົບເອເລັກໂທຣນິກ.

## 3.2 ມາດຕະການສະເພາະແຕ່ລະດ້ານ:

### 3.2.1 ມາດຕະການດ້ານສ່ວຍສາອາກອນ

- ແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງຫົວໜ່ວຍ ວິສາຫະກິດ, ວິຊາການໃຫ້ຈະແຈ້ງ ລະຫວ່າງ ກົມສ່ວຍສາອາກອນກັບພະແນກສ່ວຍສາອາກອນແຂວງ, ນະຄອນຫຼວງ ແລະ ລະຫວ່າງແຂວງ, ນະຄອນຫຼວງ ກັບບັນດາຫ້ອງສ່ວຍສາອາກອນເມືອງທີ່ຂຶ້ນກັບ. ລະຫວ່າງຫ້ອງການສ່ວຍສາອາກອນເມືອງ ກັບບ້ານທີ່ຂຶ້ນກັບ. ຕາມຈິດໃຈຂອງຄຳແນະນຳປະຕິບັດວຽກງານ 03 ສ້າງຂອງຂະແໜງການເງິນ.

- ຂະແໜງສ່ວຍສາອາກອນ ແຕ່ລະຂັ້ນຕ້ອງຮີບຮ້ອນດຳເນີນການສຳຫຼວດຖານອາກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສົມທົບກັບຂະແໜງອຸດສາຫະກຳການຄ້າ ເພື່ອກຳສະພາບຖານອາກອນໃຫ້ມີຄວາມຮັດກຸມ ທົ່ວເຖິງ; ສົມທົບກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ດຳເນີນການສຳຫຼວດສະພາບທີ່ດິນ. ໃຫ້ມີຄວາມຊັດເຈນ, ຖືກຕ້ອງກັບຄວາມເປັນຈິງ. ຂໍ້ມູນດັ່ງກ່າວຈະເປັນພື້ນຖານການຄິດໄລ່, ການຄຳນວນເກັບລາຍຮັບໃນແຕ່ລະໄລຍະໃຫ້ໄດ້ຢ່າງຄົບຖ້ວນ ອັດຊ່ອງຫວ່າງການຫຼົບຫຼີກພັນທະຂອງວິສາຫະກິດ ທີ່ຂຶ້ນທະບຽນ ຢູ່ທ້ອງຖິ່ນໜຶ່ງ ແຕ່ໄປເຄື່ອນໄຫວທຸລະກິດຢູ່ທ້ອງຖິ່ນອື່ນ ໂດຍປະຕິບັດຕາມຫຼັກການ "ການເຄື່ອນໄຫວທຸລະກິດຢູ່ທ້ອງຖິ່ນໃດ ຕ້ອງປະຕິບັດພັນທະອາກອນຢູ່ທ້ອງຖິ່ນນັ້ນ" ແລະ ປະຕິບັດການແບ່ງປັນຜົນປະໂຫຍດ ລະຫວ່າງ ທ້ອງຖິ່ນເກັບອາກອນ ກັບ ທ້ອງຖິ່ນທີ່ຈົດທະບຽນວິສາຫະກິດ ຕາມທີ່ກຳນົດໄວ້ໃນຄຳແນະນຳວຽກງານ 03 ສ້າງຂອງຂະແໜງການເງິນ.

- ຂະແໜງການເງິນເປັນເຈົ້າການສົມທົບ ກັບຂະແໜງການແລະ ທ້ອງຖິ່ນກ່ຽວຂ້ອງ ເພື່ອຄົ້ນຫາກຳນົດລາຄາມາດຖານ, ຄ່າເຊົ່າອະສັງຫາລິມະຊັບໃນແຕ່ລະເຂດ ໂດຍສະເພາະໃນເຂດຕົວເມືອງ, ຊານເມືອງ ເພື່ອເປັນພື້ນຖານຄິດໄລ່ອາກອນລາຍໄດ້ຈາກຄ່າເຊົ່າ ແລະ ການຊື້ຂາຍອະສັງຫາລິມະຊັບ.

- ສືບຕໍ່ປະຕິບັດການເຮັດທົດລອງ ໃບເກັບເງິນອາກອນແບບມີລາງວັນ ຢູ່ນະຄອນຫຼວງວຽງຈັນ ແລະ ອອັມຂ້າງສູນກາງ.

- ປະສານສົມທົບກັບບັນດາ ຂະແໜງການ ແລະ ທ້ອງຖິ່ນທີ່ມີລາຍຮັບວິຊາການ (ຄ່າທຳນຽມ, ຄ່າບໍລິການ) ໃຫ້ປະຕິບັດການໄລ່ລຽງຈົດຮັບ-ຈົດຈ່າຍຜ່ານງົບປະມານເປັນແຕ່ລະເດືອນ ແລະ ຖືກຕ້ອງຕາມສາລະບານງົບປະມານ.

- ຢຸດຕິເກັບເງິນສ່ວຍສາອາກອນເປັນເງິນສົດ, ນຳໃຊ້ລະບົບການມອບເງິນສ່ວຍສາອາກອນຜ່ານລະບົບທະນາຄານໂດຍສະເພາະເຂດທີ່ມີເງື່ອນໄຂ ເຊັ່ນ: ນະຄອນຫຼວງວຽງຈັນ, ເທດສະບານແຂວງ ແລະ ບັນດາເມືອງທີ່ມີລະບົບທະນາຄານ ບໍລິການຢ່າງກວ້າງຂວາງ.

- ສືບຕໍ່ຊຸກຍູ້ ແກ້ໄຂບັນຫາໜີ້ສິນອາກອນ ຄ້າງມອບຂອງພູເບ້ຍມາຍນິ້ງ ແລະ ບໍລິສັດຊັນບາ(ສະຫວັນເວກັສ) ໃຫ້ສຳເລັດຂາດຕົວ.

- ຍູ້ແຮງການພັດທະນາທັນສູ່ຄວາມເປັນທັນສະໄໝ ລະບົບຂໍ້ມູນຂ່າວສານ ສ່ວຍສາອາກອນ, ເລີ່ມຈັດຕັ້ງປະຕິບັດການເກັບອາກອນຍານພາຫະນະດ້ວຍລະບົບເອເລກໂທຣນິກ ນັບແຕ່ເດືອນ 01/2014 ເປັນຕົ້ນໄປ.

- ປັບປຸງການຈັດຕັ້ງ ແລະ ຈັດວາງບຸກຄະລາກອນ ຂອງຂະແໜງສ່ວຍສາອາກອນໃຫ້ມີຄວາມເໝາະສົມ ເພີ່ມກຳລັງພະນັກງານໃຫ້ທ້ອງຖິ່ນທີ່ມີຖານອາກອນຫຼາຍ, ມີແຫຼ່ງລາຍຮັບສ່ວຍສາອາກອນສູງ; ປັບປຸງກົງຈັກການຈັດຕັ້ງ, ການເຄື່ອນໄຫວຂອງໜ່ວຍງານກວດກາດ້ານສ່ວຍສາອາກອນໃຫ້ມີຄຸນນະພາບ ມີປະສິດທິພາບສູງຂຶ້ນ.

<u>3.2.2 ມາດຕະການພາສີ</u>

- ບັນດາດ່ານສາກົນ ແລະ ດ່ານທ້ອງຖິ່ນ ຕ້ອງເພີ່ມຄວາມເຂັ້ມງວດ ໃນການກວດກາ ສິນຄ້າເຂົ້າ-ອອກ ຕາມພາລະບົດບາດ ແລະ ລະບຽບກົດໝາຍກຳນົດໄວ້, ນຳໃຊ້ເຄື່ອງມືທັນສະໄໝທີ່ມີແລ້ວ (ເຄື່ອງສາຍແສງຫຼື ລະບົບອາຊີກູດາ) ຢ່າງມີປະສິດທິພາບ.

- ສຳລັບສິນຄ້າສົ່ງອອກ ເປັນຕົ້ນ ປະເພດຊັບພະຍາກອນທຳມະຊາດ (ໄມ້ແລະແຮ່ທາດ) ຕ້ອງປະຕິບັດຕາມຄຳສັ່ງແນະນຳເລກທີ 1765/ກງ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ ເພື່ອອັດຊ່ອງຫວ່າງການຫຼົບຫຼີກພາສີ, ອາກອນ ເປັນຕົ້ນການແຈ້ງພາສີບໍ່ຖືກຕ້ອງກັບຄວາມເປັນຈິງໃຫ້ໄດ້ຢ່າງຂາດຕົວ ແນໃສ່ຍົກລະດັບຄວາມສາມາດເກັບລາຍຮັບຈາກສິນຄ້າສົ່ງອອກດັ່ງກ່າວແທດເໝາະກັບຄວາມເປັນຈິງ.

- ປັບປຸງກົນໄກ ວິທີການຕິດຕາມກວດກາການນຳເຂົ້າສິນຄ້າຢ່າງເຂັ້ມງວດ:

+ ອອກແຈ້ງການໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນກ່ຽວກັບການຍົກເວັ້ນພາສີ-ອາກອນ ການນຳເຂົ້າສິນຄ້າ ໃຫ້ປະຕິບັດຢ່າງຖືກຕ້ອງແລະເຂັ້ມງວດ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປີ 2009; ທຸກໂຄງການລົງທຶນຂອງລັດ ຕ້ອງລວມທັງມູນຄ່າພາສີ-ອາກອນໃນມູນຄ່າລວມຂອງໂຄງການ.

+ ດຳເນີນການກວດກາຂຶ້ນບັນຊີ ຈຳນວນບໍລິສັດ ທີ່ໄດ້ຮັບນະໂຍບາຍຍົກເວັ້ນ ພາສີ-ອາກອນ ນຳເຂົ້າປະເພດພາຫະນະ ຮັບໃຊ້ໂຄງການໂດຍກົງ ເພື່ອງົດການໃຫ້ນະໂຍບາຍໃນສົກປີ 2013-2014 ຍົກເວັ້ນພາຫະນະທີ່ຍັງບໍ່ທັນໄດ້ໃຫ້ນະໂຍບາຍ ແຕ່ມີຄວາມຈຳເປັນນຳໃຊ້ໃນໂຄງການ. ພ້ອມນີ້ ຈັດຕັ້ງຄະນະລົງກວດກາບ່ອນຂາຍພາຫະນະກົນຈັກໜັກ ຖ້າເຫັນວ່າແມ່ນພາຫະນະທີ່ນຳເຂົ້າ ດ້ວຍການຍົກເວັ້ນພາສີ-ອາກອນ ຕ້ອງດຳເນີນການປັບໃໝຕາມລະບຽບກົດໝາຍ.

+ ເພີ່ມທະວີບົດບາດການເຄື່ອນໄຫວຂອງບໍລິສັດ ຂາເຂົ້າ-ຂາອອກ ໃຫ້ເປັນຜູ້ນຳເຂົ້າແຕ່ລະໝວດສິນຄ້າ ແລະ ເປັນຜູ້ຂາຍຍົກ ໃຫ້ບັນດາຫ້າງຮ້ານຂາຍຍ່ອຍ ເພື່ອຄວາມສະດວກໃນການໄລ່ລຽງ ພາສີ-ອາກອນ, ຫຼຸດຜ່ອນ ແລະ ຈຳກັດການນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບກົດໝາຍ; ກວດກາຄືນລະບົບການຈັດຕັ້ງການເຄື່ອນໄຫວຂອງຜູ້ບໍລິການນຳເຂົ້າສິນຄ້າ (Shipping) ແລະ ຢຸດຕິການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ເປັນຊ່ອງຫວ່າງການຫຼົບຫຼີກພາສີ-ອາກອນ.

+ ເລີ່ມຈັດຕັ້ງປະຕິບັດການຄຸ້ມຄອງການນຳເຂົ້າຍານພາຫະນະ ດ້ວຍລະບົບເອເລັກໂທຣນິກ ນັບແຕ່ເດືອນ 1/2014 ເປັນຕົ້ນໄປເພື່ອສະກັດກັ້ນການຫຼົບຫຼີກພາສີ-ອາກອນ ໃນທຸກຮູບແບບ.

+ ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້ານະໂຍບາຍ ແລະ ມາດຕະການຍົກເວັ້ນພາສີ-ອາກອນການນຳເຂົ້ານ້ຳມັນເຊື້ອໄຟເພື່ອນຳສະເໜີລັດຖະບານພິຈາລະນາ.

+ ຄົ້ນຄວ້າຈັດຕັ້ງປະຕິບັດກົນໄກການຈັດເກັບລາຍຮັບຈາກປະເພດສິນຄ້າຟຸມເຟືອຍ ເພື່ອເຮັດໃຫ້ລັດໄດ້ຮັບຜົນປະໂຫຍດສູງຂຶ້ນ ຈາກການນຳເຂົ້າສິນຄ້າດັ່ງກ່າວ ທັງເປັນການຈຳກັດການນຳເຂົ້າທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ. ເພີ່ມທະວີການຕິດຕາມກວດກາການນຳເຂົ້າສິນຄ້າຂອງບັນດາຮ້ານຄ້າປອດພາສີ ເພື່ອໃຫ້ນຳໃຊ້ຖືກຕ້ອງຕາມເປົ້າໝາຍ, ສາງສິນຄ້າປອດພາສີ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງພາສີ.

- ຮີບຮ້ອນຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ ແລະ ຈັດວາງພະນັກງານຂອງພາສີ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງຄ່ອງຕົວ, ມີປະສິດທິຜົນ ເອື້ອອຳນວຍຄວາມສະດວກດ້ານການພົວພັນການຄ້າ ແລະ ການບໍລິການລະຫວ່າງປະເທດ ໂດຍສຸມໃສ່ບາງວຽກດັ່ງນີ້:

+ ປັບປຸງກົງຈັກຂອດພາສີເຂດ ຫັນໄປເປັນພາສີແຂວງ ໂດຍໃຫ້ມີພະແນກພາສີແຂວງຢູ່ທຸກແຂວງ ເພື່ອປະຕິບັດພາລະບົດບາດ ຄຸ້ມຄອງຕິດຕາມກວດກາ ບັດດາດ່ານທີ່ຂຶ້ນກັບແຂວງ, ເຮັດໜ້າທີ່ປະສານງານກັບຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວຂ້ອງ ເພື່ອຍົກລະດັບຄວາມສາມາດການເກັບລາຍຮັບຈາກພາສີໃຫ້ສູງຂຶ້ນ.

+ ປັບປຸງກົງຈັກການກວດກາຄືນການແຈ້ງພາສີ ແລະ ສະກັດກັ້ນການລັກລອບພາສີ ໃຫ້ມີຄວາມເຂັ້ມແຂງ ດ້ານການຈັດຕັ້ງ ແລະ ບຸກຄະລາກອນ ໂດຍຫັນເປັນອາຊີບ ບໍ່ໃຫ້ມີການໝູນວຽນສັບປ່ຽນໄປເຮັດວຽກອື່ນ ໂດຍສະເພາະບໍ່ໃຫ້ສັບປ່ຽນໄປປະຈຳການຢູ່ດ່ານ.

<u>3.2.3 ມາດຕະການດ້ານການຄຸ້ມຄອງຊັບສິນຂອງລັດ</u>

ຊັບສິນຂອງລັດມີຄວາມໝາຍກວ້າງຂວາງ ແລະ ເປັນແຫຼ່ງທຶນຮອນທີ່ສຳຄັນ ຖ້າມີການຄຸ້ມຄອງ ນຳໃຊ້ທີ່ດີ ລັດຖະບານສາມາດສ້າງລາຍຮັບໄດ້ຢ່າງໃຫຍ່ຫຼວງ ເພື່ອນຳໃຊ້ເຂົ້າໃນການສ້າງສາພັດທະນາປະເທດຊາດ.

- ກົມຄຸ້ມຄອງຊັບສິນຂອງລັດ ແລະ ຫ້ອງການຄຸ້ມຄອງຊັບສິນຂອງແຂວງໃນທົ່ວປະເທດ ປະສານສົມທົບກັບຂະແໜງການກ່ຽວຂ້ອງເພື່ອສັງລວມບັນຊີຊັບສິນຂອງລັດ ທີ່ຂຶ້ນກັບການຄຸ້ມຄອງຂອງບັນດາກະຊວງ ອົງການ ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນເປັນຕົ້ນປະເພດທີ່ດິນ ແລະ ສິ່ງປຸກສ້າງ ເພື່ອຄຸ້ມຄອງການນຳໃຊ້ຢ່າງຮັດກຸມ ມີປະສິດທິຜົນ, ລາຍຮັບຈາກການໃຫ້ເຊົ່າ-ສຳປະທານ ຫຼື ຂາຍຊັບສິນຂອງລັດ ຕ້ອງລວມສູນເຂົ້າງົບປະມານແຫ່ງລັດ.

- ກົມຄຸ້ມຄອງຊັບສິນຂອງລັດ ແລະ ຫ້ອງການຄຸ້ມຄອງຊັບສິນຂອງແຂວງຕ້ອງເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອປະຕິບັດບາງວຽກງານດັ່ງນີ້ :

+ ສົມທົບກັບຂະແໜງອຸດສະຫະກຳການຄ້າ ແລະ ຂະແໜງກະສິກຳປ່າໄມ້ ດຳເນີນການກວດກາໄມ້ຍືດທີ່ຍັງຕົກຄ້າງຢູ່ໃນທ້ອງຖິ່ນຕ່າງໆ ເພື່ອນຳສະເໜີລັດຖະບານແກ້ໄຂດ້ວຍການປະມູນຂາຍອອກ ເພື່ອນຳລາຍໄດ້ເຂົ້າງົບປະມານ.

+ ເຂົ້າຮ່ວມການກວດກາການເອົາໄມ້ຂຶ້ນລົດ ເພື່ອກຽມການສົ່ງອອກຢັ້ງຢືນຄວາມຖືກຕ້ອງຕາມການອະນຸຍາດ. ໃນກໍລະນີເຈົ້າໜ້າທີ່ພາສີຢູ່ດ່ານກວດກາເຫັນຄວາມຜິດພາດ, ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດທີ່ເຂົ້າຮ່ວມການກວດກາຕ້ອງຮັບຜິດຊອບ.

+ ເປັນເຈົ້າການຕິດຕາມຊຸກຍູ້ມອບເງິນລາຍຮັບຈາກການຂາຍໄມ້ ເຂົ້າລາຍຮັບງົບປະມານ ຢ່າງຄົບຖ້ວນ ຕາມລະບຽບກົດໝາຍກຳນົດໄວ້, ບໍ່ອະນຸຍາດໃຫ້ເປີດບັນຊີລໍຖ້າເພື່ອຝາກເງິນລາຍໄດ້ຈາກການຂາຍໄມ້.

+ ຮີບຮ້ອນສົມທົບກັບຂະແໜງພະລັງງານ ບໍ່ແຮ່ເພື່ອກວດການການເຄື່ອນໄຫວ ແລະ ການປະຕິບັດພັນທະຂອງບັນດາໂຄງການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ທາດ. ຖ້າໂຄງການໃດບໍ່ປະຕິບັດພັນທະຕາມລະບຽບກົດໝາຍພາຍຫຼັງແຈ້ງເຕືອນສອງຄັ້ງ ໃຫ້ສະເໜີຖອນໃບອະນຸຍາດ; ກໍລະນີການຕໍ່ກຳນົດເວລາ ການຊອກຄົ້ນ, ສຳຫຼວດ ຕ້ອງພິຈາລະນາ ເພີ່ມຄ່າສຳປະທານໃນລະດັບທີ່ເໝາະສົມ. ຄົ້ນຄວ້ານຳສະເໜີຂັ້ນເທິງປັບປຸງຍົກລະດັບອັດຕາຄ່າສຳປະທານໃຫ້ຢູ່ໃນລະດັບທີ່ເໝາະສົມກວ່າເກົ່າ.

-ສະເໜີຂັ້ນເທິງພິຈາລະນາ ປະກາດໃຊ້ນິຕິກຳວ່າດ້ວຍການຫັນຊັບສິນຂອງລັດເປັນທຶນ ເພື່ອຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

+ ໂຄງການລົງທຶນຂອງລັດທີ່ຈະນຳໃຊ້ແຫຼ່ງທຶນຈາກທັບຊັບສິນເປັນທຶນ ຕ້ອງບັນຈຸເຂົ້າໃນແຜນງົບປະມານແຫ່ງລັດ ຜ່ານສະພາຮັບຮອງເອົາ ເພື່ອຄວາມສະດວກ ໃນການຈັດຮັບ-ຈັດຈ່າຍ ຜ່ານງົບປະມານຢ່າງລວມສູນ; ກໍລະນີບໍ່ທັນເຂົ້າແຜນສົກປີ 2013-2014 ແມ່ນໃຫ້ສະເໜີດັດແກ້ເຂົ້າໃນແຜນ 6 ເດືອນທ້າຍປີ.

- ທົບທວນກົນໄກ, ວິທີການເອົາຊັບພະຍາກອນທຳມະຊາດ ( ໄມ້, ແຮ່ທາດ ) ຕູບກັບໂຄງການລົງທຶນຂອງລັດ ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ລັດ ດ້ວຍການຈັດຕັ້ງການສຳຫລວດ ແຫລ່ງຊັບພະຍາກອນທຳມະຊາດ ໃຫ້ມີຄວາມຊັດເຈນ ແລ້ວຈັດຕັ້ງປະມູນຂາຍ ຫລື ນຳໃຊ້ເປັນຫລັກຊັບຄໍ້າປະກັນເງິນກູ້ ເປັນທຶນຮອນສຳລັບຊຳລະຄ່າໂຄງການໂດຍສະແດງອອກຢ່າງລວມສູນຢູ່ໃນງົບປະມານແຫ່ງລັດ. ຢຸດຕິການມອບຊັບພະຍາກອນທຳມະຊາດ ໃຫ້ບໍລິສັດຜູ້ຮັບເໝົາກໍ່ສ້າງໂຄງການລົງທຶນຂອງລັດເປັນຜູ້ຂຸດຄົ້ນ, ຈຳໜ່າຍຊັບພະຍາກອນທຳມະຊາດ.

### <u>3.2.4 ມາດຕະການດ້ານການຄຸ້ມຄອງການເງິນລັດວິສາຫະກິດ.</u>

- ເອົາໃຈໃສ່ຕິດຕາມ ກວດກາ ສະພາບການເຄື່ອນໄຫວຂອງບັນດາວິສາຫະກິດທີ່ລັດຖືຮຸ້ນ 100% ແລະ ວິສາຫະກິດທີ່ລັດຮ່ວມທຶນ, ກຳສະພາບຖານະການເງິນຂອງແຕ່ລະບໍລິສັດຢ່າງຖືກຕ້ອງ ຊັດເຈນ ເພື່ອເປັນພື້ນຖານການໄລ່ລຽງ ພັນທະທີ່ຕ້ອງມອບໃຫ້ລັດ ແລະ ປະຕິບັດການມອບພັນທະດັ່ງກ່າວຢ່າງຄົບຖ້ວນ ທັນເວລາ. ໃຫ້ຄຳແນະນຳກ່ຽວກັບການປັບປຸງແກ້ໄຂບັນຫາທີ່ເກີດຂື້ນ ເພື່ອຮັບປະກັນການເຄື່ອນໄຫວທຸລະກິດດຳເນີນໄປຢ່າງຄ່ອງຕົວ ແລະ ມີປະສິດທິຜົນສູງຂື້ນເລື້ອຍໆ.

- ຊຸກຍູ້, ຊ່ວຍເຫລືອ ບັນດາລັດວິສາຫະກິດທີ່ລັດຖືຮຸ້ນ 100% ແລະ ວິສາຫະກິດທີ່ລັດຮ່ວມຖືຮຸ້ນ ຈັດຕັ້ງປະຕິບັດລະບອບບັນຊີວິສາຫະກິດຢ່າງຖືກຕ້ອງສົມບູນຕາມມາດຖານທີ່ກຳນົດໄວ້.

- ສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງ ເພື່ອປຶກສາມາດຕະການແກ້ໄຂ ສຳລັບລັດວິສາຫະກິດທີ່ມີບັນຫາ, ບໍ່ມີປະສິດທິຜົນ ກຳໄລໜ້ອຍ, ເງິນປັນຜົນຕ່ຳ ເພື່ອປັບປຸງແກ້ໄຂ ໃຫ້ທັນການ ຫລຸດຜ່ອນການແບກຫາບຂອງລັດ ດ້ວຍການປັບປຸງກົນໄກ ການຈັດຕັ້ງ, ການບໍລິຫານ ຫລື ຫັນໄປສູ່ຮູບການອື່ນ. ( ຂາຍຮຸ້ນຂອງລັດເພື່ອເອົາເງິນເຂົ້າງົບປະມານ ).

- ເພີ່ມທະວີວຽກງານຕິດຕາມກວດກາໂຄງການ ທີ່ໄດ້ຮັບເງິນກູ້ຕໍ່ຈາກກະຊວງການເງິນ. ເພື່ອເລັ່ງເກັບກູ້ໜີ້ສິນທັງຕົ້ນທຶນ ແລະ ດອກເບ້ຍ ໃຫ້ໄດ້ຕາມຄາດໝາຍ.

- ຄົ້ນຄວ້າມາດຕະການ, ວິທີການປະກອບທຶນ ຫຼື ສະໜັບສະໜູນດ້ານທຶນຮອນໃຫ້ລັດວິສາຫະກິດ ທີ່ເຄື່ອນໄຫວມີປະສິດທິຜົນໃຫ້ມີຖານະດ້ານການເງິນສູງຂຶ້ນ.

## 3.3 <u>ນະໂຍບາຍສົ່ງເສີມການເກັບລາຍຮັບ:</u>

ເພື່ອເຮັດໃຫ້ບັນດາມາດຕະການຂຸດຄົ້ນເກັບລາຍຮັບໄດ້ຮັບການຈັດຕັ້ງປະຕິບັດຢ່າງຈິງຈັງ, ການປະຕິບັດລາຍຮັບໄດ້ຕາມຄາດໝາຍ ແລະ ລື່ນຄາດໝາຍ, ກະຊວງການເງິນກຳນົດນະໂຍບາຍຊຸກຍູ້ສົ່ງເສີມດັ່ງນີ້:

- ບັນດາຂະແໜງການແລະທ້ອງຖິ່ນ ທີ່ປະຕິບັດລາຍຮັບໄດ້ເກີນແຜນ ມີສິດນຳໃຊ້ສ່ວນລາຍຮັບເກີນແຜນດັ່ງກ່າວ ໂດຍບໍ່ລໍຖ້າການໄລ່ລຽງຂາດຕົວງົບປະມານ ແຕ່ເປົ້າໝາຍລາຍຈ່າຍນັ້ນ ຕ້ອງນອນໃນແຜນງົບປະມານທີ່ສະພາແຫ່ງຊາດຮັບຮອງແລ້ວ ໂດຍໃຫ້ບູລິມະສິດ ການຊຳລະໜີ້ສິນໂຄງການລົງທຶນຂອງລັດ, ໂຄງການແກ້ໄຂຄວາມ ທຸກຍາກຂອງປະຊາຊົນ ຫຼື ວຽກງານທີ່ຈຳເປັນຮີບດ່ວນຂອງຂະແໜງການ ແລະ ທ້ອງຖິ່ນ.

-ລາຍຮັບພາສີຈາກດ່ານສາກົນ ເປັນລາຍຮັບງົບປະມານສູນກາງ 100% ຈະແບ່ງໃຫ້ທ້ອງຖິ່ນທີ່ດ່ານຂຶ້ນກັບໃນອັດຕາສ່ວນ 10%. ສ່ວນລາຍຮັບຈາກດ່ານທ້ອງຖິ່ນໃຫ້ມອບເປັນລາຍຮັບຂອງແຂວງ, ນະຄອນຫຼວງ 100%; ລາຍຮັບຈາກດ່ານປະເພນີໃຫ້ມອບເປັນລາຍຮັບງົບປະມານຂັ້ນເມືອງ 100%.

- ລາຍຮັບຈາກການຢຶດໄມ້ຜິດກົດໝາຍ, ຢຶດພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງຕາມລະບຽບກົດໝາຍໃຫ້ປະຕິບັດດັ່ງນີ້:

+ ລາຍຮັບຈາກການຂາຍໄມ້ຮິບ ໃຫ້ມອບເປັນລາຍຮັບທ້ອງຖິ່ນ 50% ແລະ ເປັນລາຍຮັບສູນກາງ 50%.

+ ລາຍຮັບຈາກການຂາຍລົດຮິບ ຖ້າຮິບຈາກການກວດກາຂອງສູນກາງ ໃຫ້ມອບເປັນລາຍຮັບຂອງສູນກາງ 100%, ຖ້າຮິບຈາກການກວດກາຂອງທ້ອງຖິ່ນໃຫ້ມອບເປັນລາຍຮັບຂອງທ້ອງຖິ່ນ 100%.

+ ສ່ວນການແບ່ງປັນຜົນປະໂຫຍດດ້ານການເກັບລາຍຮັບສ່ວຍສາອາກອນແລະອື່ນໆ ໃຫ້ປະຕິບັດຕາມຄຳແນະນຳເລກທີ 2202/ກງ ລົງວັນທີ 15/08/2012 ກ່ຽວກັບການເຮັດທົດລອງ 3 ສ້າງຂອງຂະແໜງການເງິນ.

+ ລາຍຮັບພູດແບ່ງປັນລະຫວ່າງສູນກາງ ກັບ ແຂວງ, ນະຄອນຫຼວງ; ແຂວງ, ນະຄອນຫຼວງ ກັບ ເມືອງ; ເມືອງ ກັບ ບ້ານ ໃຫ້ຈົດເປັນລາຍຮັບງົບປະມານທ້ອງຖິ່ນກ່ຽວຂ້ອງຢ່າງເຕັມສ່ວນ (ບໍ່ແມ່ນເງິນບຳເນັດ); ເບື້ອງນຳໃຊ້ກໍ່ໃຫ້ຈົດເປັນລາຍຈ່າຍງົບປະມານ ຕາມແຜນທີ່ສະພາແຫ່ງຊາດໄດ້ຮັບຮອງ ບໍ່ໃຫ້ສ້າງແຜນລາຍຈ່າຍເພີ່ມຕື່ມອີກ.

+ ລາຍຮັບວິຊາການຂອງບັນດາກະຊວງ, ອົງການ ແລະ ກອງທຶນຂອງລັດ ທີ່ສາມາດປະຕິບັດລາຍຮັບໄດ້ເກີນແຜນ ແມ່ນອະນຸຍາດໃຫ້ນຳໃຊ້ລາຍຮັບເກີນແຜນດັ່ງກ່າວນັ້ນໄດ້ ບົນພື້ນຖານຜູ້ສັ່ງການເປັນຜູ້ຕົກລົງ ແລະ ໃຫ້ສຸມໃສ່ແກ້ໄຂໜີ້ສິນເກີດຂຶ້ນຈາກການບໍລິຫານລຽກງານ. ກໍລະນີ ການປະຕິບັດລາຍຮັບວິຊາການ ແລະ ລາຍຮັບກອງທຶນຂອງລັດ ບໍ່ສາມາດບັນລຸຄາດໝາຍເກັບລາຍຮັບ ຈະຕ້ອງຕັດລາຍຈ່າຍ ບ້ວງກ່ຽວຂ້ອງຕາມສັດສ່ວນ ລາຍຮັບທີ່ປະຕິບັດບໍ່ໄດ້ຕາມແຜນ.

+ ກໍລະນີແຂວງ, ນະຄອນຫຼວງ ບໍ່ສາມາດປະຕິບັດລາຍຮັບໄດ້ຕາມແຜນ ຈະຕ້ອງຕັດບ້ວງລາຍຈ່າຍບໍລິຫານຂອງທ້ອງຖິ່ນນັ້ນລົງ ຕາມສັດສ່ວນທີ່ປະຕິບັດລາຍຮັບບໍ່ໄດ້ຕາມແຜນ ເພື່ອຮັກສາຄວາມສົມດຸນຂອງງົບປະມານ.

### 3.4. <u>ມາດຕະການຄຸ້ມຄອງລາຍຈ່າຍ</u>

ເພື່ອຄຸ້ມຄອງລາຍຈ່າຍງົບປະມານຢ່າງຮັດກຸມຕ້ອງເອົາໃຈໃສ່ການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງລາຍຈ່າຍໃຫ້ທ້ອງຖິ່ນ ໂດຍສະເພາະຂັ້ນເມືອງ ໃຫ້ມີຄວາມຈະແຈ້ງ ແລະ ຂາດຕົວ ບົນຈິດໃຈສ້າງເມືອງໃຫ້ເປັນຫົວໜ່ວຍງົບປະມານຂັ້ນ 1 ທີ່ຂຶ້ນກັບແຂວງ, ນະຄອນຫຼວງ.

#### 3.4.1 ລາຍຈ່າຍເງິນເດືອນ, ເງິນອຸດໜູນ:

- ຖືເອົາການເບີກຈ່າຍເງິນເດືອນ, ເງິນອຸດໜູນ ເປັນບູລິມະສິດອັນດັບໜຶ່ງ ໂດຍນຳໃຊ້ລາຍຮັບພາຍໃນຂອງແຂວງ, ນະຄອນຫຼວງ ແລະ ຂອງເມືອງ ເບີກຈ່າຍເງິນເດືອນ ໂດຍບໍ່ລໍຖ້າການເຄື່ອນຍ້າຍເງິນຈາກງົບປະມານສູນກາງ. ນອກນີ້ ໃຫ້ເອົາໃຈໃສ່ປະຕິບັດລາຍຈ່າຍບໍລິຫານ ເພື່ອຮັບປະກັນການເຄື່ອນໄຫວປົກກະຕິຂອງກົງຈັກພັກ-ລັດ ແລະ ບັນດາອົງການຈັດຕັ້ງມະຫາຊົນ, ລາຍຈ່າຍດັດສົມສິ່ງເສີມ ແລະ ການຊຳລະໜີ້ສິນ ຕາມແຜນລາຍຈ່າຍທີ່ກຳນົດໄວ້ ແລະ ບົນຈິດໃຈປະຢັດມັດທະຍັດ.

- ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານ ໃນການເພີ່ມເງິນເດືອນ ໃຫ້ພະນັກງານ-ລັດຖະກອນ, ນາຍ ແລະ ພົນທະຫານ, ນາຍແລະພົນຕຳຫຼວດ, ພະນັກງານບຳນານ ແລະ ພະນັກງານເສຍອົງຄະ ຈາກມູນຄ່າ 4.800 ກີບຕໍ່1ດັດສະນີ ເປັນ 6.700 ກີບຕໍ່ໜຶ່ງດັດສະນີ. ສຳລັບບ້ອງເງິນເດືອນ ພະນັກງານເຂົ້າການໃໝ່ ຕາມໂກຕ້າທີ່ລັດຖະບານອະນຸມັດ (16.500 ຄົນ) ໄດ້ຂຶ້ນແຜນລວມສູນໄວ້ຢູ່ກະຊວງການເງິນ ແລະ ຈະແຈ້ງເພີ່ມໃຫ້ ໃນ 6 ເດືອນ ທ້າຍປີ ບົນພື້ນຖານຈຳນວນພະນັກງານເຂົ້າໃໝ່ທີ່ໄດ້ຮັບເຂົ້າຕົວຈິງ. ສ່ວນຂະແໜງສຶກສາ ແລະສາທາໃຫ້ຈັດສັນຢູ່ໃນກອບຕົວເລກທີ່ສະພາແຫ່ງຊາດໄດ້ຮັບຮອງ ແລະ ຈະບໍ່ໄດ້ເພີ່ມເພດານໃຫ້ອີກ.

- ເງິນເດືອນ, ອຸດໜູນພະນັກງານ 95% ໃຫ້ຈັດສັນເຂົ້າຮ່ວງລາຍຈ່າຍ ພະນັກງານຝຶກງານ.

- ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ຕ້ອງຮີບຮ້ອນກວດກາ ຈຳນວນພົນ ໃຫ້ມີຄວາມຊັດເຈນ ເພື່ອເຮັດໃຫ້ການເບີກຈ່າຍເງິນເດືອນ ເງິນອຸດໜູນ ຖືກຕ້ອງຕາມນະໂຍບາຍ ແລະ ເປົ້າໝາຍກຳນົດໄວ້ ການເບີກຈ່າຍເງິນເດືອນ ເງິນອຸດໜູນ ຕ້ອງອີງໃສ່ຈຳນວນພົນມີໜ້າຕົວຈິງ ໂດຍຜ່ານການຢັ້ງຢືນຄວາມຖືກຕ້ອງຂອງກະຊວງພາຍໃນ ແລະ ພະແນກພາຍໃນແຂວງ, ນະຄອນຫຼວງ.

- ການປະຕິບັດເງິນອຸດໜູນທາດເບື່ອ ໃຫ້ປະຕິບັດຢ່າງຖືກຕ້ອງຕາມກົດໝາຍແຮງງານກຳນົດໄວ້.. ສຳລັບພະນັກງານທີ່ເຮັດວຽກ ໂດຍນຳໃຊ້ຄອມພິວເຕີ, ພິມດີດ ແມ່ນບໍ່ອະນຸຍາດໃຫ້ປະຕິບັດເງິນອຸດໜູນທາດເບື່ອ.

- ການປະຕິບັດນະໂຍບາຍເງິນອຸດໜູນພະນັກງານຂັ້ນບ້ານໃຫ້ປະຕິບັດຕາມຂໍ້ຕົກລົງເລກທີ 99/ນຍ ລົງວັນທີ 08/10/2013 ສຳລັບ 109 ບ້ານເປົ້າໝາຍເຮັດທົດລອງ 3 ສ້າງ; ສ່ວນບ້ານທີ່ບໍ່ແມ່ນເປົ້າໝາຍເຮັດທົດລອງສາມສ້າງໃຫ້ປະຕິບັດເງິນອຸດໜູນຕາມຂໍ້ຕົກລົງເລກທີ 06/ນຍ ລົງວັນທີ 21/01/2008. ຫ້ອງການພາຍໃນເມືອງເປັນຜູ້ຮັບຜິດຊອບຂຶ້ນແຜນງົບປະມານ ແລະ ປະຕິບັດການເບີກຈ່າຍເງິນອຸດໜູນດັ່ງກ່າວ.

- ລາຍຈ່າຍເງິນອຸດໜູນພະນັກງານກ່ອນອອກຮັບບຳນານໃຫ້ປະຕິບັດຢູ່ບັນດາກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງ ທີ່ກ່ຽວຂ້ອງ. ສ່ວນລາຍຈ່າຍເງິນບຳເນັດໃຫ້ ພະນັກງານ-ລັດຖະກອນອອກການໃຫ້ປະຕິບັດຢູ່ກະຊວງແຮງງານສະຫວັດດີການ ສັງຄົມ.

- ເງິນປະກັນສັງຄົມ 8% ທີ່ຫັກຈາກເງິນເດືອນ ຂອງພະນັກງານລັດຖະກອນຈະຮັກສາໄວ້ລວມຢູ່ງົບປະມານສູນກາງ ເພື່ອຈະໂອນໃຫ້ກະຊວງແຮງງານເປັນແຕ່ລະເດືອນກ່ອນວັນທີ 15 ໂດຍບໍ່ລໍຖ້າການເບີກຈ່າຍເງິນເດືອນ ຂອງຂະແໜງການ. ຫຼັງຈາກຂະແໜງການຕ່າງໆທັງສູນກາງ ແລະ ທ້ອງຖິ່ນ ຈ່າຍເງິນເດືອນ ແລະ ເງິນອຸດໜູນຕົວຈິງ, ແລ້ວສົ່ງຕາຕະລາງລາຍຈ່າຍເງິນເດືອນໃຫ້ຂະແໜງງົບປະມານ ເພື່ອໄລ່ລຽງຄືນກັບກະຊວງແຮງງານ. ສຳລັບກະຊວງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ໃຫ້ປະຕິບັດຕາມໜັງສືແຈ້ງການສະບັບເລກທີ 1846/ອປລ, ລົງວັນທີ 27/09/2011 ແລະ ແຈ້ງການສະບັບເລກທີ 032/ອປລ, ລົງວັນທີ 21/10/2009.

- ການແປພາສາ, ການຄົ້ນຄວ້າວິໄຈ, ການຂຽນປຶ້ມ ແລະ ຮຽບຮຽງປຶ້ມທີ່ຕິດພັນກັບວຽກງານວິຊາສະເພາະປົກກະຕິ ແມ່ນບໍ່ໃຫ້ຄິດໄລ່ຄ່າແຮງງານ.

- ການປະຕິບັດໜ້າທີ່ເວນຍາມຂອງພະນັກງານລັດຖະກອນ ຂະແໜງວິຊາການ ໃນໄລຍະນອກໂມງລັດຖະການ ຫລື ວັນພັກລັດຖະການ ໃຫ້ຄິດໄລ່ເງິນອຸດໜູນເວນຍາມຕາມລະບຽບກົດໝາຍ; ສ່ວນການຈັດຕັ້ງພະນັກງານລັດຖະກອນ ເວນຍາມບາງຄັ້ງຄາວ ຂອງອົງການບໍລິຫານບໍ່ໃຫ້ຄິດໄລ່ເງິນອຸດໜູນເວນຍາມ.

-ຮີບຮ້ອນຄົ້ນຄວ້ານຳສະເໜີລັດຖະບານປະກາດໃຊ້ມາດຕະການປະຢັດມັດທະຍັດການໃຊ້ຈ່າຍບໍລິຫານ ແລະ ການໃຊ້ຈ່າຍລົງທຶນ ໃຫ້ມີຄວາມຊັດເຈນ ແລະ ສາມາດປະຕິບັດໄດ້; ຮີບຮ້ອນປັບປຸງຍົກລະດັບຂໍ້ຕົກລົງ

ວ່າດ້ວຍກຳນົດໝາຍລາຍຈ່າຍບໍລິຫານຂອງລັດ ໃຫ້ເປັນດຳລັດຂອງລັດຖະບານ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານມີຄວາມຄ່ອງຕົວແທດເໝາະກັບສະພາບຕົວຈິງ.

3.4.2 ລາຍຈ່າຍບໍລິຫານປົກກະຕິ:

ລາຍຈ່າຍບໍລິຫານປົກກະຕິແມ່ນໃຫ້ປະຕິບັດຕາມນະໂຍບາຍປະຢັດຢ່າງເຂັ້ມງວດ ແລະ ໃຫ້ເປັນຮູບປະທຳ. ເອົາໃຈໃສ່ຈັດສັນລາຍຈ່າຍຄ່ານ້ຳປະປາ, ຄ່າໄຟຟ້າ, ຄ່າໂທລະສັບໃຫ້ພຽງພໍ ແລະ ການນຳໃຊ້ຕ້ອງມີມາດຕະການປະຢັດ ແລະ ບໍ່ໃຫ້ມີໜີ້ສິນເກີດຂຶ້ນຕື່ມ.

- ລາຍຈ່າຍນະໂຍບາຍທີ່ຕິດພັນກັບບຸກຄົນເຊັ່ນ: ນ້ຳມັນເຊື້ອໄຟ, ຄ່າໂທລະສັບ, ຄ່າໄຟຟ້າ, ນ້ຳປະປາຂອງພະນັກງານການນຳຂັ້ນສູງ ແລະ ພະນັກງານຕຳແໜ່ງ ບໍລິຫານຕາມດຳລັດ 99/ນຍ ລວມທັງວິຊາການ ໃຫ້ປະຕິບັດຄືສົກປີຜ່ານມາ.

- ລາຍຈ່າຍບຳລຸງຮັກສາພາຫະນະຂອງລັດ: ລົດໃຫຍ່ ແລະ ລົດຈັກທີ່ມອບໃຫ້ບຸກຄົນນຳໃຊ້ ນັບແຕ່ຕຳແໜ່ງ ບໍລິຫານຕາມດຳລັດ 99/ນຍ ລົງມາ, ການປ່ຽນຖ່າຍນ້ຳມັນເຄື່ອງ, ລ້າງອັດສີດ, ຈອດຢາງ ແລະ ສ້ອມແປງກໍລະນີເປເພ, ອຸບັດຕິເຫດ ນອກໂມງລັດຖະການໃຫ້ຜູ້ນຳໃຊ້ຮັບຜິດຊອບໃນການໃຊ້ຈ່າຍ.

- ລາຍຈ່າຍບຳລຸງ, ສ້ອມແປງປົກກະຕິ ທັງສ້ອມແປງໃຫຍ່ ແລະ ສ້ອມແປງນ້ອຍ ແມ່ນລັດຮັບຜິດຊອບ.

- ລາຍຈ່າຍໄປເຮັດວຽກທາງການລະຫວ່າງກະຊວງ ກັບ ກະຊວງ, ພະແນກ ກັບ ພະແນກຢູ່ແຂວງ, ຫ້ອງການ ກັບ ຫ້ອງການຢູ່ພາຍໃນເມືອງ, ຫ້ອງການບ້ານ ກັບ ຫ້ອງການບ້ານ, ຂະແໜງການລົງຊຸກຍູ້ລາຍຮັບ, ລົງໄລ່ລຽງ ທີ່ຕິດພັນກັບວຽກວິຊາສະເພາະ ໃຫ້ຖືວ່າເປັນວຽກງານປົກກະຕິຂອງຕົນ ລັດຈະຄິດໄລ່ແຕ່ນ້ຳມັນລົດໃຫ້ເທົ່ານັ້ນ.

- ລາຍຈ່າຍກອງປະຊຸມປະຈຳປີ ຂອງບັນດາກະຊວງ, ອົງການ, ບັນດາແຂວງ, ເມືອງ ທີ່ມີຂະແໜງການທ້ອງຖິ່ນ ຫຼື ສູນກາງເຂົ້າຮ່ວມນຳ ໃຫ້ຄິດໄລ່ອັດຕາກິນ, ຄ່າພັກເຊົາ ແລະ ຄ່າເດີນທາງ. ສ່ວນພະນັກງານພາຍໃນເຂົ້າຮ່ວມ ໃຫ້ຄິດໄລ່ແຕ່ອັດຕາກິນ, ຖ້າມີລ້ຽງເຂົ້າສວຍ ອັດຕາກິນບໍ່ໃຫ້ຄິດໄລ່ອີກ.

- ລາຍຈ່າຍຮັບໃຊ້ກອງປະຊຸມລະດັບຊາດ ໃຫ້ປະຕິບັດຕາມຂໍ້ຕົກລົງ ຂອງລັດຖະບານ.

- ການໄປວຽກທາງການ ບໍ່ວ່າຈະຢູ່ພາຍໃນປະເທດ ຫລື ຕ່າງປະເທດ ຕ້ອງຈັດສັນ ຄັດເລືອກໜ້າວຽກທີ່ມີຄວາມຈຳເປັນ, ໂຈະໜ້າວຽກທີ່ບໍ່ຈຳເປັນ, ນຳໃຊ້ຈຳນວນຄົນທີ່ເຂົ້າຮ່ວມໃຫ້ໜ້ອຍແຕ່ໃຫ້ໄດ້ຮັບຜົນ.

3.4.3 ທຸກລາຍຈ່າຍບໍລິຫານວິຊາການ ແລະ ກອງທຶນຂອງລັດ ຕ້ອງເອົາ ເຂົ້າໃນແຜນງົບປະມານແຫ່ງລັດ ປະຈຳສົກປີ ແລະ ຈັດຕັ້ງປະຕິບັດຢູ່ຄັງເງິນແຫ່ງຊາດ ແລະ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ ແລະ ກວດກາຂອງ ຂະແໜງການ ທີ່ກ່ຽວຂ້ອງເປັນຕົ້ນຕໍ, ສ່ວນຂະແໜງການເງິນຈະປະຕິບັດການກວດກາຫຼັງຈ່າຍເມື່ອເຫັນວ່າມີຄວາມຈຳເປັນ. ການຈັດຕັ້ງປະຕິບັດຈົດຮັບ-ຈົດຈ່າຍ, ລາຍຮັບ-ລ່າຍຈ່າຍວິຊາການ ແລະ ກອງທຶນຂອງລັດໃຫ້ປະຕິບັດເປັນເດືອນ ຕາມບົດແນະນຳວ່າດ້ວຍການຄຸ້ມຄອງ ລາຍຮັບ-ລາຍຈ່າຍວິຊາການຢ່າງເຂັ້ມງວດ ຢ່າງຊ້າໃຫ້ປະຕິບັດເປັນແຕ່ລະງວດ, ບໍ່ອະນຸຍາດໃຫ້ສ້າງລະບຽບການຈ່າຍໂດຍບໍ່ຖືກເປົ້າໝາຍ.

3.4.4 ລາຍຈ່າຍດັດສົມສິ່ງເສີມ: ການປະຕິບັດລາຍຈ່າຍໃນພາກດັ່ງກ່າວນີ້ ຕ້ອງໄປຕາມແຜນວຽກ, ແຜນງານ, ແຜນເງິນ ກ່ອນຈະອະນຸມັດລາຍຈ່າຍພາກນີ້ທຸກຄັ້ງຕ້ອງຈັດສັນແຜນງານ ຕິດຂັດມາພ້ອມ. ກໍລະນີຫົວໜ່ວຍງົບປະມານໃດບໍ່ມີແຜນງານລະອຽດຈະບໍ່ໄດ້ຈ່າຍ.

3.4.5 ລາຍຈ່າຍເງິນແຮລັດຖະບານ, ຄັງແຮທ້ອງຖິ່ນ ແລະ ຄັງສະສົມແຫ່ງລັດ ແມ່ນຕ້ອງນຳໃຊ້ເຂົ້າໃນເຫດການຮີບດ່ວນ, ເຫດການສຸກເສີນໄພພິບັດທາງທຳມະຊາດເປັນຕົ້ນ: ໄຟໄໝ້, ນ້ຳຖ້ວມ, ລົມພາຍຸ, ໂລກລະບາດ ແລະ ເຫດການສຸກເສີນອື່ນທີ່ບໍ່ສາມາດຄາດຄະເນໄດ້.

3.4.6 ລາຍຈ່າຍ 3 ສາຍຕັ້ງຂອງຂະແໜງການເງິນ ( ພາສີ, ອາກອນ ແລະ ຄັງເງິນ ) ແລະ ສາຍຕັ້ງຂະແໜງອື່ນໆ ຂຶ້ນແຜນລວມສູນຢູ່ຂັ້ນສູນກາງ ແລະ ແຈ້ງແຜນການລາຍຈ່າຍເປັນງວດ ລົງໃຫ້ຂະແໜງສາຍຕັ້ງຢູ່ຂັ້ນແຂວງ, ນະຄອນຫຼວງ; ແຂວງ-ນະຄອນຫຼວງ ແຈ້ງແຜນໃຫ້ເມືອງ (ສຳລັບເມືອງທົດລອງ 3 ສ້າງ ແລະເມືອງທີ່ມີເງື່ອນໄຂ). ສຳລັບການເບີກຈ່າຍຕົວຈິງຂະແໜງການສາຍຕັ້ງຢູ່ຂັ້ນແຂວງ, ນະຄອນຫຼວງ ປະກອບເອກະສານຕາມລະບຽບການເງິນໄປເບີກຈ່າຍຢູ່ຄັງເງິນແຫ່ງຊາດປະຈຳແຂວງ ແລະ ນະຄອນຫຼວງ ແລະ ເມືອງກ່ຽວຂ້ອງ. ສ່ວນບັນດາເມືອງທີ່ບໍ່ແມ່ນເປົ້າໝາຍທົດລອງ 3 ສ້າງ ແລະເມືອງທີ່ບໍ່ທັນມີເງື່ອນໄຂຄຸ້ມຄອງລາຍຈ່າຍແມ່ນແຂວງ, ນະຄອນຫຼວງເປັນຜູ້ຈັດຕັ້ງປະຕິບັດການເບີກຈ່າຍໂດຍກົງ.

3.4.7 ໃຫ້ຈຳກັດລາຍຈ່າຍຊື້ຊັບສິນບັດຄົງທີ່ ຮັບໃຊ້ກົງຈັກບໍລິຫານ ທີ່ເຫັນວ່າບໍ່ມີຄວາມຈຳເປັນ ແລະ ນຳໃຊ້ ວັດຖຸອຸປະກອນທີ່ມີຢູ່ໃຫ້ເຕັມສ່ວນ ແລະ ໃຫ້ມີປະສິດທິຜົນ.

3.4.8 ລາຍຈ່າຍພາກລົງທຶນຂອງລັດ: ທຸກໂຄງການລົງທຶນຂອງລັດ ໃຫ້ເຈົ້າຂອງໂຄງການປະຕິບັດຕາມດຳລັດ ວ່າດ້ວຍການປະມູນຈັດຊື້ ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດເລກທີ 03/ນຍ, ລົງວັນທີ 09 ມັງກອນ 2004. ໃຫ້ຕິດຕາມກວດກາການກໍ່ສ້າງ, ສ້ອມແປງ ຂອງບໍລິສັດຮັບເໝົາ. ເປັນເຈົ້າການໃນການຂຶ້ນແຜນຊຳລະຕາມສັນຍາ ເພື່ອບໍ່ໃຫ້ສ້າງໜີ້ ແລະ ບໍ່ໃຫ້ຈ່າຍໂຄງການນອກແຜນທີ່ສະພາຮັບຮອງ.

- ລາຍຈ່າຍຄຸ້ມຄອງໂຄງການ ແມ່ນລາຍຈ່າຍເພື່ອເກັບກຳຂໍ້ມູນ, ກວດກາຕິດຕາມ ແລະ ປະເມີນຜົນໂຄງການລົງທຶນໂດຍກົງ. ບັນດາໂຄງການລົງທຶນຂອງລັດຕ້ອງຄິດໄລ່ຄ່າພາສີ-ອາກອນເຂົ້າໃນມູນຄ່າໂຄງການຢ່າງຄົບຖ້ວນ, ບໍ່ອະນຸຍາດໃຫ້ຍົກເວັ້ນພາສີ-ອາກອນສຳລັບໂຄງການລົງທຶນດ້ວຍງົບປະມານຂອງລັດ.

3.4.9 ໃຫ້ກົມການເງິນຕ່າງປະເທດ ເປັນເຈົ້າການສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຄຸ້ມຄອງການນຳໃຊ້ແຫຼ່ງທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ບໍ່ມີເງື່ອນໄຂຜູກມັດ, ດອກເບ້ຍຕ່ຳ, ໄລ ຍະກູ້ຢືມຍາວ ເພື່ອປະຕິບັດໂຄງການພັດທະນາທີ່ເປັນບຸລິມາສິດ ຂອງລັດຖະບານຢ່າງມີປະສິດທິຜົນ ພ້ອມ ດຽວກັນນັ້ນກໍ່ຕ້ອງຕິດຕາມການຈັດຕັ້ງປະຕິບັດໂຄງການດັ່ງກ່າວຢ່າງເປັນລະບົບ ເພື່ອສະຫລຸບລາຍງານໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບເປັນປົກກະຕິ.

3.4.10 ໃຫ້ບັນດາກະຊວງ,ອົງການທຽບເທົ່າອ້ອມຂ້າງສູນກາງ, ແຂວງ ແລະ ນະຄອນຫຼວງ ເອົາໃຈໃສ່ໃນການລົງແຜນລາຍຈ່າຍງົບປະມານປະຈຳປີ, ງວດ ໃນລະບົບເຄືອຂ່າຍເປັນຂະແໜງການ, ເມືອງ ລະອຽດຕາມສາລະບານງົບປະມານ.

3.4.11 ການອະນຸມັດລາຍຈ່າຍງົບປະມານແຫ່ງລັດ: ໃຫ້ອະນຸມັດເປັນງວດ ສຳລັບລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນ, ເງິນນະໂຍບາຍ, ເງິນບໍລິຫານ ແລະ ເງິນຊື້ໃໝ່ ສຳລັບຂະແໜງການສາຍຕັ້ງ ແລະ ສະຖານທູດ ແມ່ນອະນຸມັດເປັນ 6 ເດືອນຕົ້ນ ແລະ 6 ເດືອນທ້າຍ, ລາຍຈ່າຍເງິນລົງທຶນຂອງລັດ ອະນຸມັດລາຍຈ່າຍເປັນຖ້ຽວ ຕາມເອກະສານກວດກາວຽກສຳເລັດຕົວຈິງ.

3.4.12 ການດັດແກ້ແຜນງົບປະມານແຫ່ງລັດ ໃຫ້ປະຕິບັດຕາມມາດຕາ 54 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ).

3.4.13 ການດັດສະເລັ່ຽລາຍຈ່າຍງົບປະມານແຫ່ງລັດ ໃຫ້ປະຕິບັດໃນ 6 ເດືອນທ້າຍປີ ຕາມມາດຕາ 65 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

3.4.14 ການນຳໃຊ້ໃບອະນຸມັດ, ໃບຄຳສັ່ງຈ່າຍ ແລະ ໃບຖອນ ໃຫ້ປະຕິບັດດັ່ງນີ້:

- ການອະນຸມັດ ຈ່າຍເງິນເດືອນ, ເງິນນະໂຍບາຍ ແລະ ລາຍຈ່າຍບໍລິຫານປົກກະຕິ, ລາຍຈ່າຍດັດສົມ ສິ່ງເສີມ, ລາຍຈ່າຍຊື້ໃໝ່ ແລະ ລາຍຈ່າຍການລົງທຶນ ທີ່ນອນໃນແຜນງົບປະມານປະຈຳປີຂອງຕົນ ທີ່ສະພາແຫ່ງຊາດຮັບຮອງ ແມ່ນຫົວໜ້າກົມງົບປະມານ, ຫົວໜ້າພະແນກການເງິນແຂວງ ທີ່ຖືກມອບສິດຈາກລັດຖະມົນຕີ, ຈາກເຈົ້າແຂວງ ແລະ ເຈົ້າຄອງນະຄອນ. ສະເພາະເມືອງເຊັດທົດລອງ 3 ສ້າງແມ່ນເຈົ້າເມືອງ ຫຼື ຫົວໜ້າຫ້ອງການເງິນເມືອງທີ່ຖືກມອບສິດເປັນຜູ້ອະນຸມັດ.

- ການສັ່ງຈ່າຍບ້ວງເງິນລວມສູນ ເຊິ່ງບໍ່ຂຶ້ນກັບຄວາມຮັບຜິດຊອບຂອງຂະແໜງການໃດ, ລາຍຈ່າຍທີ່ປະຕິບັດຕາມຂໍ້ຜູກພັນສັນຍາ ຂອງລັດຖະບານກັບຕ່າງປະເທດ ເຊັ່ນ: ລາຍຈ່າຍ ຮ່ວມປະກອບທຶນ ແລະ ໃຫ້ກູ້, ລາຍຈ່າຍຊ່ວຍເຫຼືອລ້າ, ລາຍຈ່າຍເງິນແຮລັດຖະບານ, ເງິນແຮຂອງແຂວງ ແລະ ນະຄອນຫຼວງ, ຊຳລະຕົ້ນທຶນ, ດອກເບ້ຍເງິນກູ້ຢືມ ແລະ ລາຍຈ່າຍອື່ນໆ. ແມ່ນຫົວໜ້າກົມງົບປະມານ, ຫົວໜ້າພະແນກ ການເງິນແຂວງ ທີ່ຖືກມອບສິດຈາກລັດຖະມົນຕີ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງເປັນຜູ້ອະນຸມັດ.

- ການຖອນເງິນຂອງຫົວໜ່ວຍງົບປະມານຂັ້ນສູນກາງ ແລະ ທ້ອງຖິ່ນ (ຂັ້ນແຂວງ, ນະຄອນຫຼວງ ແລະ ເມືອງ) ແຕ່ລະຄັ້ງໃຫ້ປະຕິບັດຕາມແຜນທີ່ໄດ້ອະນຸມັດ ໂດຍແມ່ນລັດຖະມົນຕີ (ຂັ້ນສູນກາງ), ຫົວໜ້າພະແນກການອ້ອມຂ້າງແຂວງ ແລະ ເມືອງ(ຂັ້ນທ້ອງຖິ່ນ) ຫຼື ຜູ້ທີ່ຖືກມອບສິດເປັນຜູ້ສັ່ງຈ່າຍ.

- ການຈັດຕັ້ງປະຕິບັດງົບປະມານຂອງຫົວໜ່ວຍງົບປະມານຂັ້ນສູນກາງ ແລະ ທ້ອງຖິ່ນ (ຂັ້ນແຂວງ, ນະຄອນຫຼວງ ແລະ ເມືອງ) ໃຫ້ແບ່ງຄວາມຮັບຜິດຊອບດັ່ງນີ້:

+ ຂັ້ນສູນກາງແມ່ນກົມງົບປະມານ; ຂັ້ນແຂວງ-ນະຄອນຫຼວງ ແມ່ນຫ້ອງງົບປະມານແຂວງ-ນະຄອນຫຼວງ; ຂັ້ນເມືອງ ແມ່ນຫ້ອງການເງິນເມືອງຮັບຜິດຊອບລົງ ແລະ ຕິດຕາມແຜນປີ, ແຜນງວດ ພ້ອມທັງພິມໃບອະນຸມັດເປັນງວດ ສຳລັບລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນ, ລາຍຈ່າຍເງິນນະໂຍບາຍ ແລະ ເງິນຊ່ວຍໜູນຕ່າງໆ, ລາຍຈ່າຍບໍລິຫານປົກກະຕິ, ລາຍຈ່າຍເງິນດັດສົມ,ສິ່ງເສີມ ແລະ ບຳລຸງ, ລາຍຈ່າຍເງິນຊື້ຊັບສິນປັດຄົງທີ່ຮັບໃຊ້ກິ່ງຈັກບໍລິຫານ; ສ່ວນລາຍຈ່າຍເງິນລົງທຶນຂອງລັດ ແມ່ນອະນຸມັດເປັນຖ້ຽວ.

+ ຫົວໜ່ວຍງົບປະມານຂັ້ນສູນກາງ ແລະ ທ້ອງຖິ່ນ ຮັບຜິດຊອບລົງຕິດຕາມ ແລະ ສະຫຼຸບ ການເບີກຈ່າຍແຕ່ລະຄັ້ງ ແລະ ພິມໃບຖອນເງິນ ສົ່ງໃຫ້ຄັງເງິນແຫ່ງຊາດຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະຕິບັດການເບີກຈ່າຍ; ໃຫ້ສົມທຽບຕົວເລກກັບຄັງເງິນແຫ່ງຊາດທຸກໆເດືອນ.

+ ເມືອງທີ່ມີລະບົບເຄືອຂ່າຍ ແມ່ນໃຫ້ພິມ ແລະ ຕິດຕາມການອະນຸມັດງົບປະມານຢູ່ໃນລະບົບເຄືອຂ່າຍ; ກໍລະນີເມືອງບໍ່ມີເງື່ອນໄຂ (ບໍ່ມີລະບົບເຄືອຂ່າຍ ແລະ ຢູ່ຫ່າງໄກ) ໃຫ້ພິມ ແລະ ຕິດຕາມການອະນຸມັດ, ການຖອນນອກລະບົບກ່ອນ ໂດຍນຳໃຊ້ເຄື່ອງມືທີ່ມີຄື: ຄອມພິວເຕີ, ພິມດີດ, ໃບຕິດຕາມ ຫຼື ປື້ມຕິດຕາມລະອຽດຕາມສາລະບານງົບປະມານແລ້ວສົ່ງອະນຸມັດໃຫ້ຫ້ອງງົບປະມານແຂວງ, ນະຄອນຫຼວງ ເພື່ອລົງຕິດ ຕາມໃນລະບົບເຄືອຂ່າຍເປັນແຕ່ລະງວດ; ສົ່ງໃບຖອນໃຫ້ຄັງເງິນແຫ່ງຊາດປະຈຳແຂວງເພື່ອລົງຕິດຕາມການເບີກຈ່າຍຕົວຈິງໃນລະບົບເຄືອຂ່າຍເປັນແຕ່ລະເດືອນ.

**3.5 ການດຸ່ນດ່ຽງງົບປະມານ:** ການດຸ່ນດ່ຽງງົບປະມານໃຫ້ບັນດາແຂວງ, ນະຄອນຫຼວງ ສຳລັບງວດທີ I ຈະດຸ່ນດ່ຽງຕາມແຜນລາຍຮັບ-ລາຍຈ່າຍປະຈຳງວດ, ສຳລັບງວດ II, III, IV ຕ້ອງໄດ້ໄລ່ລຽງຕົວຈິງ

ໂດຍອີງໃສ່ບົດສະຫຼຸບການຈັດຕັ້ງປະຕິບັດແຜນລາຍຮັບ-ລາຍຈ່າຍຂອງຄັງເງິນແຫ່ງຊາດ, ສູນກາງຈະດຸ່ນດ່ຽງໃຫ້ແຂວງ, ແຂວງດຸ່ນດ່ຽງໃຫ້ເມືອງຕາມຕົວເລກຂາດດຸນຕົວຈິງ.

## IV. ການແກ້ໄຂໜີ້ສິນ

- ເອົາໃຈໃສ່ຕິດຕາມຄຸ້ມຄອງ ແລະ ປະຕິບັດການຊຳລະໜີ້ສິນໃຫ້ໄດ້ຕາມສັນຍາ, ເປັນຕົ້ນໜີ້ສິນຕ່າງປະເທດ.

- ເອົາໃຈໃສ່ຊຳລະໜີ້ສິນບັນດາໂຄງ ການລົງ ທຶນຂອງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງແລ້ວເປັນບູລິມະສິດ. ເພີ່ມຄວາມເປັນເຈົ້າການຂອງ ກະຊວງການເງິນແລະບັນດາທ້ອງຖິ່ນໃນການແກ້ໄຂໜີ້ສິນ ໃຫ້ຫຼຸດລົງເທື່ອລະກ້າວ ໂດຍສະເພາະໜີ້ສິນລົງທຶນຂອງລັດ ແລະ ພັນທະບັດລັດຖະບານ ທັງຕົ້ນທຶນແລະດອກເບ້ຍ ທີ່ເຖິງກຳນົດຊຳລະ ດ້ວຍການຂຸດຄົ້ນແຫຼ່ງທຶນຮອນ ທັງພາຍໃນແລະຕ່າງປະເທດ. ສິ່ງສຳຄັນແມ່ນຕ້ອງຢຸດຕິການສ້າງໜີ້ສິນໃໝ່ ທີ່ເກີນກວ່າຄວາມສາມາດແບກຫາບຂອງລັດ.

- ກ່ຽວກັບການຊຳລະໜີ້ ບັນດາໂຄງການລົງທຶນຂອງລັດ ດ້ວຍຮູບແບບມີສ່ວນຫຼຸດ ແລະ ຮູບແບບອອກພັນທະບັດ ກະຊວງການເງິນຕ້ອງສືບຕໍ່ແກ້ໄຂຊຳລະສະສາງ ສ່ວນທີ່ໄດ້ມີຂໍ້ຕົກລົງຊຳລະແລ້ວ ໃຫ້ໄດ້ຢ່າງຂາດຕົວ, ກະກຽມແຫລ່ງທຶນ ເພື່ອໄຖ່ຖອນພັນທະບັດຊຳລະໜີ້ ເມື່ອຄົບກຳນົດຊຳລະໃຫ້ໄດ້ຢ່າງຄົບຖ້ວນ, ທັນເວລາ.

- ກໍລະນີ ຕົວເລກຊຳລະໜີ້ເກີນເພດານແຜນງົບປະມານ ໃຫ້ບັນທຶກໄວ້ບັນຊີສະເພາະເພື່ອຕິດຕາມ ແລະ ຈັດສັນເຂົ້າແຜນງົບປະມານສົກປີຕໍ່ໄປ.

- ສຳລັບໜີ້ສິນຄ້າງຊຳລະເປັນເອກະສານ ( ໃບຄຳສັ່ງຈ່າຍ; ໃບຖອນເງິນ ) ຢູ່ຄັງເງິນແຫ່ງຊາດ ສົກປີ 2012 - 2013 ລວມທັງໜີ້ລ່ວງໜ້າຈາກລະບົບຄັງເງິນແຫ່ງຊາດ ຕ້ອງຊອກຫາແຫຼ່ງທຶນ ມາຊຳລະໃຫ້ສຳເລັດ ເພື່ອຮັກສາສະພາບຄ່ອງດ້ານການເງິນຂອງລັດຖະບານ.

## V. ການສະຫລຸບງົບປະມານ

ການສະຫຼຸບລາຍງານການປະຕິບັດງົບປະມານແຫ່ງລັດ ໃຫ້ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່ປະຕິບັດດັ່ງນີ້:

- ການສະຫຼຸບປິດບັນຊີງົບປະມານ ແລະ ສະຫຼຸບຂາດຕົວງົບປະມານແຫ່ງລັດ ປະຈຳສົກປີ 2013 - 2014 ມອບໃຫ້ເປັນຄວາມຮັບຜິດຊອບໂດຍກົງຂອງບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ, ທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫລວງວຽງຈັນ ແລະ ເຈົ້າເມືອງ ເປັນເຈົ້າການຊີ້ນຳການສະຫຼຸບປິດບັນຊີ ແລະ ສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານ ໃຫ້ໄປຕາມບົດແນະນຳ ແລະ ກົດໝາຍງົບປະມານ (ໃຫ້ປະຕິບັດຕາມບົດແນະນຳປິດສະຫຼຸບຂາດຕົວຂອງກະຊວງການເງິນ ສະບັບເລກທີ 2453/ກງ, ລົງວັນທີ 10/09/2012). ການສະຫຼຸບລາຍງານ ສະພາບການເຄື່ອນໄຫວ ຕ້ອງຍົກໃຫ້ເຫັນຈຸດດີ ແລະ ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ສະເໜີເພື່ອປັບປຸງເຮັດໃຫ້ພາກປະຕິບັດຕົວຈິງມີປະສິດທິຜົນດີ.

- ໃຫ້ບັນດາກະຊວງ, ອົງການທຽບເທົ່າອ້ອມຂ້າງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ລາຍງານສະພາບການປະຕິບັດ ແຜນລາຍຮັບ-ລາຍຈ່າຍງົບປະມານປະຈຳເດືອນ(ເປັນພາກ), ປະຈຳງວດ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ຕາມສາລະບານງົບປະມານເປັນຂະແໜງການ ໂດຍແຍກໃຫ້ເຫັນລາຍຮັບ-ລາຍຈ່າຍເງິນວິຊາການ ແລະ ກອງທຶນ. ບົດລາຍງານປະຈຳເດືອນຂອງຂະແໜງລາຍຮັບ, ຫ້ອງງົບປະມານ ແລະ ຄັງເງິນຂັ້ນເມືອງຕ້ອງສົ່ງໃຫ້ຂະແໜງລາຍຮັບ, ງົບປະມານ ແລະ ຄັງເງິນແຂວງ, ນະຄອນຫຼວງ ພາຍໃນວັນທີ 01 ຂອງເດືອນຖັດມາ.

ຂະແໜງການລາຍຮັບ, ຫ້ອງງົບປະມານ ແລະ ຄັງເງິນແຫ່ງຊາດຢູ່ຂັ້ນແຂວງ ນະຄອນຫຼວງຕ້ອງສະຫຼຸບວຽກງານຂອງຕົນເປັນປະຈຳເດືອນສົ່ງໃຫ້ກົມກ່ຽວຂ້ອງ (ທາງແຟັກ) ບໍ່ໃຫ້ກາຍວັນທີ 05 ຂອງເດືອນຖັດມາ. ກົມກ່ຽວຂ້ອງຂອງກະຊວງການເງິນຕ້ອງກຳນົດແບບຟອມລາຍງານປະຈຳເດືອນເພື່ອຄວາມເປັນເອກະພາບໃນການປະຕິບັດ.

- ໃຫ້ບັນດາກະຊວງ, ອົງການ, ບັນດາແຂວງ ແລະ ນະຄອນຫຼວງ ( ເຈົ້າຂອງໂຄງການ ) ສະຫຼຸບລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ ລາຍຈ່າຍລົງທຶນຂອງລັດ ປະຈຳງວດ, ປີ ເປັນໂຄງການລະອຽດ. ສົ່ງໃຫ້ກະຊວງການເງິນ, ພະແນກການເງິນປະຈຳແຂວງ, ກະຊວງແຜນການ ແລະ ການລົງທຶນ, ພະແນກແຜນການ ແລະ ການລົງທຶນປະຈຳແຂວງ.

- ສຳລັບບັນດາກະຊວງ ທີ່ໄດ້ຮັບການຈັດສັນທຶນຈາກໂຄງການນ້ຳເທີນ 2 ໃຫ້ສະຫຼຸບລາຍງານສະເພາະລະອຽດເປັນໂຄງການ ໂດຍແຍກໃຫ້ເຫັນລະຫັດໂຄງການ, ຊື່ໂຄງການ, ມູນຄ່າໂຄງການ, ແຜນການປີ, ມູນຄ່າຊຳລະໃນປີ, ຜົນໄດ້ຮັບຄວາມຄືບໜ້າໂຄງການ ແລະ ທີ່ຕັ້ງໂຄງການ ແລ້ວນຳສົ່ງໃຫ້ກົມງົບປະມານ ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ.

ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍຄຳແນະນຳສະບັບນີ້ ໃຫ້ລະອຽດຕາມຂະແໜງການວິຊາສະເພາະຂອງຕົນຕື່ມອີກ, ພ້ອມທັງເຜີຍແຜ່ຜັນຂະຫຍາຍໃຫ້ພະແນກການທີ່ຕົນເອງຄຸ້ມຄອງ ຫຼື ຫ້ອງການວິຊາການຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ເຈົ້າເມືອງ ຈົ່ງຮັບຮູ້ ແລະ ຊີ້ນຳງພາຂະແໜງການທີ່ຕົນຄຸ້ມຄອງ ເພື່ອຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄຳພູນວົງ